Alert.seattle.gov/hazmat(**ສານເຄມີ ແລະ ວັດຖຸອັນຕະລາຍ**)

**ຄວາມຈິງ:** ສານເຄມີ ແລະວັດຖຸອັນຕະລາຍຕ່າງໆ ເປັນພັຍຕໍ່ຊີວິດ ສຸຂພາບ ຫຼື ຊັບສິນເມື່ອໃຊ້ບໍ່ຖືກ ຊຶ່ງເປັນເຫດໃຫ້ມີການຮົ່ວໄຫຼ ຫຼືປ່ອຍອາຍພິດອອກມາ. ເຮົາບໍ່ສາມາດມອງເຫັນ ຖືກກິ່ນ ແລະ ຊີມ ສານເຄມີແລະວັດຖຸເຫຼົ່ານັ້ນໄດ້ສເມີ.

**ສິ່ງທີ່ຕ້ອງເຮັດ:**

- ໃຫ້ຟັງຄຳແນະນຳຈາກເຈົ້າໜ້າທີ່ທ້ອງຖິ່ນໃຫ້ດີ. ຂື້ນກັບວ່າທ່ານຢູ່ບ່ອນໃດ ເຂົາເຈົ້າອາດບອກທ່ານໃຫ້ໜີຈາກບໍລິເວນນັ້ນ ຫຼື ຢູ່ກັບບ່ອນກໍໄດ້.
- ຖ້າເຂົາເຈົ້າສັ່ງໃຫ້ທ່ານຢູ່ກັບບ່ອນ ຈົ່ງເອົາຄອບຄົວແລະສັດລ້ຽງເຂົ້າມາຂ້າງໃນ. ປິດປະຕູ, ປ່ອງຢ້ຽມ ແລະ fireplace dampers(ຝາອັດປ່ອງຄ້ວນໄຟ). ເອົາຜ້າຊຸ່ມອຸດຮູທາງເຂົ້າປະຕູແລະຮູຕ່າງໆທີ່ມີລົມຂ້າງນອກລ່ວງເຂົ້າມາ. ປິດພັດລົມ, ອາຍເຢັນ, ອາຍອຸ່ນຫຼືລະບົບອື່ນໆທີ່ດູດອາກາດຈາກຂ້າງນອກ. ຕຽມຫາແນວສຳຮອງແລະໃຊ້ສິ່ງທີ່ມີຢູ່ມາອຸດຮູຕ່າງໆ ເພື່ອສ້າງສິ່ງກີດກັນລົມທາງນອກບໍ່ໃຫ້ມາເຖິງທ່ານ.
- ເມື່ອມີປະກາດໃຫ້ຍົກຍ້າຍ ທ່ານຕ້ອງຍົກຍ້າຍດ່ວນ. ໃຫ້ໄປຕາມເສັ້ນທາງທີ່ໄດ້ຈັດໄວ້ຕາມການແຈ້ງບອກໃນການຍົກຍ້າຍ. ເສັ້ນທາງຍົກຍ້າຍບາງສາຍຈະມີປ້າຍຕິດໄວ້ຕາມຫົນທາງແລະທາງຫຼວງ(ຮາຍເວ)ຕ່າງໆ.
- ຖ້າທ່ານເຫັນວ່າມີການຮົ່ວໄຫຼ ຈົ່ງໜີຈາກບໍລິເວນນັ້ນ ຈົ່ງເຕືອນຄົນອື່ນດ້ວຍຄວາມສງົບອາລົມ ໃຫ້ເຂົາເຈົ້າໜີອອກຈາກບ່ອນນັ້ນ ແລ້ວໃຫ້ໂທເບີ 911 ເພື່ອແຈ້ງເຫດການນັ້ນ.
- ຖ້າທ່ານຄຶດວ່າທ່ານໄດ້ສຳພັດເຄມີ ຫຼືສານທາງຊີວະວິທຍາ ໃຫ້ທ່ານໂທຫາ Poison Control Center (ສູນຄວບຄຸມສານເບື່ອ) (1-800-222-1222) ຫຼືຕິດຕໍ່ແພດໝໍໃຫ້ຊ່ວຍເຫຼືອຢ່າງເໝາະສົມ.
- ຕິດຕາມຂ່າວທາງວິທຍຸເພື່ອຟັງຂ່າວຄືບໜ້າກ່ຽວກັບຂໍ້ມູນສຸກເສີນ.
- **ຖ້າວ່າທ່ານຮູ້ຈັກຜູ້ໃດທີ່ບໍ່ເຂົ້າໃຈ ບໍ່ໄດ້ເບິ່ງ ຫຼືບໍ່ໄດ້ຍິນຂ່າວສານນີ້ ໃຫ້ທ່ານບອກເຂົາເຈົ້າຕໍ່.**

**ລິ້ງທີ່ເປັນປໂຍດ:**

http://mil.wa.gov/emergency-management-division/hazards/hazardous-material

http://www.ready.gov/hazardous-materials-incidents

http://www.redcross.org/prepare/disaster/chemical-emergency